# Medicare ແລະ Apple Health Classic Medicaid

## ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ

### ຄວາມແຕກຕ່າງລະຫວ່າງ **Medicare** ແລະ **Apple Health Classic Medicaid** ແມ່ນຫຍັງ?

ທັງສອງໂຄງການແມ່ນສຳລັບບຸກຄົນທີ່ມີອາຍຸ 65 ຫລືແກ່ກວ່າ,ທີ່ມີຄວາມຕາບອດຫລືຄວາມເສັຽອົງຄະ,ຫລືຢູ່ໃນຄວາມຕ້ອງການໃນການບໍລິການແລະການອູ້ມຊູລະຍະຍາວ.ຄວາມແຕກຕ່າງຂອງໂຄງການລວມເອົາ:

- Medicare ເປັນໂຄງການປະກັນພັຍຂອງຣັດຖະບານກາງທີ່ຖືກບໍຣິຫານໂດຍ Social Security Administration (SSA) ແລະບໍ່ມີຂອບເຂດລາຍໄດ້.
- Apple Health Classic Medicaid ຖືກບໍຣິຫານໂດຍ Health Care Authority (HCA) ແລະເງື່ອນໄຂໄດ້ຮັບແລະການຈົດຊື່ລົງທະບຽນແມ່ນຜ່ານ Department of Social and Health Services (DSHS). ເງື່ອນໄຂໄດ້ຮັບໄດ້ຖືກອີງໃສ່ສ່ວນປະກອບຫລາຍໆຢ່າງ,ເຊັ່ນວ່າລາຍໄດ້,ຊັບສິນ,ບ່ອນຢູ່ອາສັຍ,ແລະການເປັນສັນຊາດຫລືສະພາບການເຂົ້າເມືອງ.

### ຂ້ອຍຕ້ອງໄດ້ຮ້ອງຂໍເອົາ **Medicare** ບໍ່ເພື່ອຈະມີເງື່ອນໄຂໄດ້ຮັບ **Apple Health Classic Medicaid?**

ບໍ່,ທ່ານບໍ່ຕ້ອງໄດ້ຮ້ອງຂໍເອົາ Medicare ກ່ອນທີ່ທ່ານຈະຮ້ອງຂໍເອົາ Apple Health Classic Medicaid. ທ່ານຍັງອາດຈະມີເງື່ອນໄຂໄດ້ຮັບ Medicare ອີກຄືກັນຖ້າຫາກວ່າທ່ານມີອາຍຸຕ່ຳກວ່າ 65 ປີຜູ້ທີ່ມີຄວາມເສັຽອົງຄະແລະກຳລັງໄດ້ຮັບ Apple Health.

### ຂ້ອຍຈະໄດ້ຮັບຄວາມຊ່ວຍເຫລືອນຳຄຳຮ້ອງຂໍເອົາ **Medicare** ຂອງຂ້ອຍໄດ້ແນວໃດ?

ທ່ານສາມາດໄດ້ຮັບຄວາມຊ່ວຍເຫລືອໂດຍການໂທຫາ SSA ຫລືໂດຍການຕິດຕໍ່ຫາ Washington State Health Insurance Benefits Advisors (SHIBA). SHIBA ໃຫ້ການບໍຣິການຟຣີແລະປົກປິດໄວ້ເປັນຄວາມລັບສຳລັບ Medicare ແລະການຊ່ວຍເຫລືອປິ່ນປົວສຸຂະພາບອື່ນໆ.

- SSA:
  - **ໂທຣະສັບ:** 1-800-772-1213 (TTY: 1-800-325-0778)
  - **ອອນລາຍນ໌:** ssa.gov
- SHIBA:
  - **ໂທຣະສັບ:** 1-800-562-6900
  - **ໂດຍຕົນເອງ:** insurance.wa.gov/find-local-shiba-office
  - **ການບໍຣິການ Language Link Services**: insurance.wa.gov/language-link-services

### ຂ້ອຍສາມາດໄດ້ຮັບ **Apple Health Classic Medicaid** ແລະ **Medicare** ໃນເວລາດຽວກັນບໍ່?

ແມ່ນ,ມັນມີຜົນປະໂຍດດີທີ່ຈະມີທັງສອງຢ່າງ Apple Health Classic Medicaid ແລະ Medicare. Apple Health ຊ່ວຍຄຸ້ມກັນຄ່າໃຊ້ຈ່າຍທີ່ Medicare ບໍ່ຄຸ້ມກັນຈ່າຍໃຫ້ເຊັ່ນວ່າເງິນຫັກອອກ,ເງິນຈ່າຍຮ່ວມ,ເຄື່ອງຊ່ວຍຟັງສຽງ,ແລະການປົວແຂ້ວ. Apple Health Classic Medicaid ຍັງມີໂຄງການ Medicare Savings Programs (MSP) ອີກຄືກັນທີ່ຈະຊ່ວຍຄຸ້ມກັນຄ່າທຳນຽມ Medicare ຂອງທ່ານ.

## ໂຄງການ **Medicare Savings Programs** ແມ່ນຫຍັງ?

ໂຄງການ Medicare Savings Programs ຊ່ວຍເຫລືອບຸກຄົນນຳຄ່າທຳນຽມ Medicare ຂອງເຂົາເຈົ້າ.ອັນນີ້ລວມເອົາຄ່າທຳນຽມ Part A ແລະ Part B ແລະອາດເປັນໄປໄດ້ຣາຍຈ່າຍທີ່ກ່ຽວພັນນຳ Medicare ຢ່າງອື່ນໆ,ເຊັ່ນວ່າປະກັນພັຍຮ່ວມແລະເງິນຫັກອອກ.

# ແຫລ່ງຊ່ວຍເຫລືອ

## Medicare

- ຄວາມປອດພັຍຂອງສັງຄົມຂອງຂ້ອຍ | SSA
- ສະວັດດີການ Medicare | SSA
- ໃບຟອມ,ຄວາມຊ່ວຍເຫລືອ & ແຫລ່ງຊ່ວຍເຫລືອ | Medicare
- ໂຄງການຊ່ວຍເຫລືອພິເສດ: Medicare's Part D ຫລວງຊ່ວຍຣາຍໄດ້ຕ່ຳ (medicareinteractive.org)

## ໂຄງການ **Medicare Savings Programs:**

- ປື້ມຄູ່ມື Medicare Savings Programs | HCA
- ໂຄງການ Medicare Savings Program | HCA

## ຮ້ອງຂໍເອົາ **Apple Health Classic Medicaid** ແລະ/ຫລື **Medicare Savings Program:**

- DSHS ຄຳຮ້ອງຂໍອອນລາຍນ໌: Washington Connection| DSHS
- ຄຳຮ້ອງເປັນເຈັ້ຽ: ຄຳຮ້ອງຂໍເອົາ Medicare Savings Program| HCA